ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# "ພິທີເປີດໂຕລະບົບລາຍງານຂໍ້ມູນທາງການເງິນຂອງສະຖາບັນການເງິນ (Financial Institution Reporting System ຫຼື ລະບົບ FIRS)"





ໃນວັນທີ 17 ທັນວາ 2025, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດ "ພິທີເປີດໂຕລະບົບລາຍງານຂໍ້ມູນທາງການເງິນຂອງສະຖາບັນການເງິນ (Financial Institution Reporting System ຫຼື FIRS)" ໂດຍການເປັນປະທານຂອງທ່ານ ປອ. ນ ບຸນຄຳ ວໍລະຈິດ, ຜູ້ວ່າການ, ມີທ່ານ ສຸລິສັກ ທຳນຸວົງ, ຮອງຜູ້ວ່າການ, ມີບັນດາຄະນະກົມ, ຜູ້ອຳນວຍການ ສະມາຄົມທະນາຄານ, ຄະນະອຳນວຍການທະນາຄານທຸລະກິດ, ຄະນະສາຂາທະນາຄານຕ່າງປະເທດ, ຄະນະຮັບຜິດ ຊອບພັດທະນາລະບົບ FIRS, ຄະນະພະແນກ ແລະ ວິຊາການຈາກກົມກ່ຽວຂ້ອງ ເຂົ້າຮ່ວມທັງໝົດຫຼາຍກວ່າ 80 ທ່ານ.

ລະບົບ FIRS ແມ່ນໄດ້ຍົກລະດັບມາຈາກລະບົບ MIS ທີ່ນຳໃຊ້ໃນປັດຈຸບັນ ເພື່ອຍົກລະດັບ ລະບົບຮັບຂໍ້ມູນລາຍງານທາງການເງິນຈາກທະນາຄານທຸລະກິດທົ່ວລະບົບ ໂດຍຜ່ານລະບົບ FIRS ທີ່ທັນສະໄໝ, ປອດໄພ ແລະ ມີປະສິດທິພາບ. ລະບົບດັ່ງກ່າວຈະເປັນລະບົບທີ່ເກັບກຳຂໍ້ມູນ ແລະ ສັງລວມຂໍ້ມູນທາງການເງິນ ແລະ ຂໍ້ມູນອື່ນໆທີ່ຕິດພັນຂອງບັນດາທະນາຄານທຸລະກິດ ແບບອັດຕະໂນມັດ ເພື່ອຮັບໃຊ້ວຽກງານຄຸ້ມຄອງທະນາຄານທຸລະກິດ ໃນການຕິດຕາມກວດກາ ແລະ ວິເຄາະ-ປະເມີນຄວາມສ່ຽງຂອງທະນາຄານທຸລະກິດໃຫ້ທັນກັບສະພາບການ. ໃນພິທີທ່ານ ປອ. ສົມປະດິດ ວໍລະຈິດ, ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ໄດ້ລາຍງານຜົນການຈັດຕັ້ງປະຕິບັດໂຄງການພັດທະນາລະບົບ FIRS ໃນໄລຍະຜ່ານມາ, ທິດທາງແຜນການ ແລະ ວິໄສທັດໃນຕໍ່ໜ້າ ຕໍ່ກັບການພັດທະນາລະບົບຂອງ ທຫລ, ພ້ອມທັງຜົນປະໂຫຍດອັນມະຫາສານຈາກການນຳໃຊ້ລະບົບ FIRS ຂອງຜູ້ຄຸ້ມຄອງ (ທຫລ) ແລະບັນດາທະນາຄານທຸລະກິດທົ່ວລະບົບ ນອກນີ້, ຍັງໄດ້ຮັບຟັງການໂອ້ລົມຂອງຜູ້ວ່າການ ຕໍ່ກັບຈຸດປະສົງຂອງການພັດທະນາລະບົບດັ່ງກ່າວ ຊຶ່ງເປັນຂີດໝາຍສຳຄັນໃນການກ້າວໄປສູ່ການພັດທະນາຄັງຂໍ້ມູນລວມສູນຂອງ ທຫລ (Big data) ໃນຕໍ່ໜ້າ.




ຂ່າວ-ພາບ: ຫ້ອງການ ທຫລ

ຢູ່ເມືອງລາວໃຊ້ເງິນກີບລາວ